ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຍທຂ
PWT

ກະຊວງໂຍທາທິການ ແລະ ຂົນສົ່ງ

ເລກທີ: 6555 /ຍທຂ
ລົງວັນທີ: 29 /3/2019.

# ຂໍ້ຕົກລົງ
## ຂອງລັດຖະມົນຕີ
## ວ່າດ້ວຍ ການແບ່ງຄວາມຮັບຜິດຊອບ ວຽກງານວິຊາສະເພາະຕາມທິດສາມສ້າງ ລະຫວ່າງ ກະຊວງ ຍທຂ ກັບ ພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ.

- ອີງຕາມ ມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 25/ກມສພ, ລົງວັນທີ 22/12/2014.
- ອີງຕາມ ຄໍາສັ່ງຂອງນາຍົກລັດຖະມົນຕີ, ສະບັບເລກທີ 34/ນຍ, ລົງວັນທີ 23/08/2016.
- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 295/ນຍ, ລົງວັນທີ 04 ກັນຍາ 2017.
- ອີງຕາມ ການຕົກລົງເຫັນດີເປັນເອກະພາບ ຂອງກອງປະຊຸມວິຊາການຂອງກະຊວງ ຍທຂ ກັບບັນດາ ພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ ຄັ້ງວັນທີ 26-27/03/2019 ທີ່ກະຊວງ ຍທຂ.

## ລັດຖະມົນຕີ ຕົກລົງ:

**ມາດຕາ 1:** ຈຸດປະສົງ.

ຂໍ້ຕົກລົງສະບັບນີ້ ແມ່ນເພື່ອຜັນຂະຫຍາຍມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 03/ກມສພ, ລົງວັນທີ 15/2/2012 ເພື່ອແບ່ງຄວາມຮັບຜິດຊອບວຽກວິຊາສະເພາະຕາມທິດສາມສ້າງ ລະຫວ່າງ ກົມຂົວທາງ, ກົມຂົນສົ່ງ, ກົມເຄຫາ ແລະ ຜັງເມືອງ, ກົມນໍ້າປະປາ, ກົມທາງນໍ້າ ແລະ ກົມການບິນພົນລະເຮືອນ, ກັບພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ ຮັບຜິດຊອບຈັດຕັ້ງປະຕິບັດຕາມທິດສາມສ້າງ.

**ມາດຕາ 2:** ການແບ່ງຄວາມຮັບຜິດຊອບ ວຽກງານວິຊາສະເພາະຕາມທິດສາມສ້າງ.

ການແບ່ງຄວາມຮັບຜິດຊອບ ວຽກວິຊາສະເພາະທັງໝົດແມ່ນໃຫ້ແຕ່ລະກົມເປັນຜູ້ສົມທົບປຶກສາຫາລື ກັບ ພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ ໃຫ້ແທດເໝາະກັບສະພາບ, ທ່າແຮງ, ເງື່ອນໄຂ, ຈຸດພິເສດຂອງແຕ່ລະທ້ອງຖິ່ນຢ່າງຖືກຕ້ອງ ແລະ ເໝາະສົມ ເພື່ອຮັບປະກັນເຮັດໃຫ້ວຽກງານດ້ານວິຊາສະເພາະ ຂອງຂະແໜງການ ໂຍທາທິການ ແລະ ຂົນສົ່ງ ໄດ້

ຖືກຈັດຕັ້ງປະຕິບັດຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ທ້ອງຖິ່ນ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໃຫ້ດີຂຶ້ນເປັນກ້າວໆ.

**ມາດຕາ 3:** ວິທີການແບ່ງຄວາມຮັບຜິດຊອບ ວຽກງານວິຊາສະເພາະຕາມທິດສາມສ້າງ.

ກົມຂົວທາງ, ກົມຂົນສົ່ງ, ກົມເຄຫາ ແລະ ຜັງເມືອງ, ກົມນ້ຳປະປາ, ກົມທາງນ້ຳ ແລະ ກົມການບິນພົນລະເຮືອນ ຕ້ອງແບ່ງວຽກ ແບ່ງຄວາມຮັບຜິດຊອບ ໃຫ້ພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ ແລະ ໃຫ້ພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ ຕ້ອງໄດ້ຄົ້ນຄວ້າແບ່ງວຽກ ແບ່ງຄວາມຮັບຜິດຊອບຂອງພະແນກຕົນ ໃຫ້ ຫ້ອງການ ຍທຂ ເມືອງ ຕາມຄວາມຮູ້ຄວາມສາມາດຕົວຈິງ ຂອງແຕ່ລະຫ້ອງການ ຍທຂ ເມືອງ, ພ້ອມທັງເອົາໃຈໃສ່ຊີ້ນຳ, ນຳພາ ຕິດຕາມ ຊຸກຍູ້ ແລະ ກວດກາ ການຈັດຕັ້ງປະຕິບັດຢ່າງເປັນປະຈຳ ທັງສະຫຼຸບຖອດຖອນບົດຮຽນ ແລະ ລາຍງານໃຫ້ຂັ້ນເທິງຖັດຕົນເພື່ອຊາບ ແລະ ມີຄຳເຫັນຊີ້ນຳ.

**ມາດຕາ 4:** ມອບໃຫ້ ພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ ເປັນເຈົ້າການຮັບຜິດຊອບກວດກາ ແລະ ຮັບຮອງເອົາການສຳຫຼວດອອກແບບ ການປະເມີນມູນຄ່າໂຄງການກໍ່ສ້າງ ແລະ ສ້ອມແປງເສັ້ນທາງຫຼວງແຂວງ, ທາງຫຼວງເມືອງ, ທາງເທດສະບານ ແລະ ທາງຊົນນະບົດ ໂດຍໃຫ້ຖືກຕ້ອງຕາມຂັ້ນຕອນລະບຽບ, ມາດຕະຖານເຕັກນິກ ແລະ ສູດຄິດໄລ່ລາຄາຫົວໜ່ວຍຂອງກະຊວງ ຍທຂ ສະບັບປັບປຸງ ປີ 2019 ທີ່ປະກາດໃຊ້ນັ້ນ, ພາຍຫລັງທີ່ໄດ້ກວດກາແບບ ແລະ ລາຄາແລ້ວ, ໃຫ້ສະເໜີຕໍ່ທ່ານເຈົ້າແຂວງ ຫຼື ຮອງເຈົ້າແຂວງຜູ້ຊີ້ນຳເພື່ອພິຈາລະນາຮັບຮອງເອົາແບບ ແລະ ມູນຄ່າໂຄງການ ຢ່າງເປັນທາງການ ຈຶ່ງສາມາດນຳໄປຈັດຕັ້ງປະຕິບັດໄດ້, ໃນກໍລະນີເຕັກນິກສັບສົນ ຫຼື ມູນຄ່າສູງເກີນຄວາມສາມາດຕົວຈິງ ຂອງພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ ແມ່ນສະເໜີຫາກະຊວງ ຍທຂ ເພື່ອພິຈາລະນາ

**ມາດຕາ 5:** ການຕິດຕາມ ຊຸກຍູ້ ແລະ ກວດກາການຈັດຕັ້ງປະຕິບັດ ຂອງບັນດາກົມ ຮ່ວມກັບ ພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ ມີດັ່ງນີ້:

1) ບັນດາກົມ ຕ້ອງສຸມໃສ່ປະຕິບັດພາລະບົດບາດຕາມ 5 ໜ້າທີ່ຄຸ້ມຄອງມະຫາພາກ ຂອງອົງການຂັ້ນສູນກາງ, ໃນນີ້ ໃຫ້ເອົາໃຈໃສ່ ສ້າງ ແລະ ປັບປຸງບັນດານິຕິກຳຕ່າງໆ ທີ່ເຫັນວ່າມີຄວາມຈຳເປັນ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດ ໃຫ້ແທດເໝາະກັບສະພາບຕົວຈິງຢູ່ທ້ອງຖິ່ນ;

2) ສ້າງເງື່ອນໄຂອຳນວຍຄວາມສະດວກ ຮອບດ້ານ ໃຫ້ ພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ ປະຕິບັດໜ້າທີ່, ທີ່ຖືກແບ່ງຄວາມຮັບຜິດຊອບໃຫ້ນັ້ນ ໃຫ້ສຳເລັດເປັນຕົ້ນແມ່ນມອບ ບຸກຄະລາກອນ, ມອບວຽກ ແລະ ງົບປະມານໃຫ້ທ້ອງຖິ່ນຫຼາຍຂຶ້ນ ແນໃສ່ເຮັດໃຫ້ວຽກງານສາມສ້າງ ໄດ້ຮັບການຈັດຕັ້ງປະຕິບັດຢ່າງໜັກແໜ້ນ ແລະ ຍືນຍົງ;

3) ປະຕິບັດໜ້າທີ່ວຽກງານຈຳນວນໜຶ່ງຕື່ມ ຕາມການມອບໝາຍຂອງລັດຖະມົນຕີ ກະຊວງ ຍທຂ, ທ່ານເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງວຽງຈັນ ໃນແຕ່ລະໄລຍະ.

**ມາດຕາ 6:** ການຈັດຕັ້ງປະຕິບັດຂໍ້ຕົກລົງໃນການມອບວຽກ ລະຫວ່າງ ບັນດາກົມຂອງກະຊວງ ຍທຂ ກັບ ພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ ສະບັບນີ້, ມອບໃຫ້ຮອງລັດຖະມົນຕີ ຜູ້ຊີ້ນຳວຽກງານສາມລ້າງຂອງກະຊວງ ຍທຂ ຊີ້ນຳບັນດາກົມ ແລະ ພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ ປຶກສາຫາລືເປັນເອກະພາບ ແລະ ເຊັນການແບ່ງຄວາມຮັບຜິດຊອບດ້ານວຽກງານວິຊາສະເພາະ ໃນເວລາອັນຄວນ, ຜ່ານການຈັດຕັ້ງປະຕິບັດຕົວຈິງ ຫາກເຫັນວ່າມີບັນຫາໃດບໍ່ສອດຄ່ອງກັບສະພາບ ແລະ ເງື່ອນໄຂຕົວຈິງ ແມ່ນມອບໃຫ້ກົມວິຊາການກ່ຽວຂ້ອງປຶກສາຫາລືກັບ ພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ ຮ່ວມກັນແກ້ໄຂ.

**ມາດຕາ 7:** ມອບໃຫ້ກອງເລຂາສາມລ້າງຂອງກະຊວງ ຍທຂ ເປັນເຈົ້າການສົມທົບກັບ ພະແນກ ຍທຂ ແຂວງ ແລະ ນະຄອນຫຼວງວຽງຈັນ ເປັນເຈົ້າການຕິດຕາມ, ກວດກາ ແລະ ສະຫຼຸບການຈັດຕັ້ງປະຕິບັດ ຕາມຂໍ້ຕົກລົງສະບັບນີ້, ເປັນແຕ່ລະເດືອນ, ງວດ ແລະ ປີ ເພື່ອລາຍງານໃຫ້ຮອງລັດຖະມົນຕີ ຜູ້ຊີ້ນຳ, ເພື່ອສະຫຼຸບລາຍງານໃຫ້ຂັ້ນເທິງຊາບ ແລະ ຊີ້ນຳ.

**ມາດຕາ 8:** ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິຜົນດີ.

**ມາດຕາ 9:** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ.

ດຣ ບຸນຈັນ ສິນທະວົງ

**ບ່ອນສົ່ງ:**

- ທ່ານ ຫົວໜ້າຫ້ອງວ່າການສູນກາງພັກ 1 ສະບັບ
- ທ່ານ ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ 1 ສະບັບ
- ທ່ານ ລັດຖະມົນຕີກະຊວງ ພາຍໃນ 1 ສະບັບ
- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ/ບັນດາທ່ານເຈົ້າແຂວງ ທ່ານລະ 1 ສະບັບ
- ຫ້ອງວ່າການນະຄອນຫຼວງ/ຫ້ອງວ່າການແຂວງ ບ່ອນລະ 1 ສະບັບ
- ກົມການປົກຄອງທ້ອງຖິ່ນ, ກະຊວງ ພາຍໃນ 1 ສະບັບ
- ບັນດາກົມທີ່ກ່ຽວຂ້ອງ ບ່ອນລະ 1 ສະບັບ
- ພະແນກ ຍທຂ ນະຄອນຫຼວງ/ແຂວງ ແລະ ຫ້ອງການ ຍທຂ ເມືອງ ບ່ອນລະ 1 ສະບັບ
- ສຳເນົາ 2 ສະບັບ